# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 18 ທັນວາ 2016 (12-18-2016)

## ພຣະຄຳຂອງພຣະເຈົ້າເຮັດໃຫ້ກ້າຫານ

**ຈຸດສຳຄັນໃນບົດຮຽນນີ້**: ດ້ວຍພຣະຄຳຂອງພຣະເຈົ້າເຮັດໃຫ້ຂ້າພະເຈົ້າສາມາດຢືນຕໍ່ສູ້ໂລກທີ່ຕໍ່ຕ້ານໄດ້.

**ຂໍ້ພຣະຄັມພີໃນບົດຮຽນ**: ເພງສັຣເສີນ 119:17-24

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃຜຈະບໍ່ມັກເມື່ອຄວາມງາມຂອງຕົ້ນຕານເວລາໃບມັນຖືກລົມພັດແກວ່ງໄປມາ. ແຕ່ຄວາມງາມຢ່າງນີ້ຫລາຍໆເທື່ອຈະຈົກຂາດໄປ. ຕາມແຄມທະເລ ເວລາລົມພະຍຸໃຫຍ່ພັດແຮງພວກເຮົາຈະເຫັນຕົ້ນຕານທັງຕົ້ນທັງລຳຖືກຫລົກຮາກລົ້ມເປັນແຖວ, ແຕ່ໃນເມືອງດຽວກັນທ່ານຍັງໄດ້ເຫັນຕົ້ນໄມ້ໂອກສາມາດຕັ້ງຢູ່ ຕໍ່ຕ້ານກຳລັງຂອງລົມພະຍຸໄດ້. ຄວາມແຕກຕ່າງລະຫວ່າງຕົ້ນຕານກັບຕົ້ນໄມ້ໂອກແມ່ນຢູ່ທີ່ຮາກ ຕົ້ນຕານມີຮາກຕາມໜ້າດິນ ສ່ວນໄມ້ໂອກຮາກຂອງມັນຢັ່ງລົງໄປເລິກ.

ຄົນເຮົາກໍ່ຄືກັນ ມີບາງຄົນຕັ້ງໝັ້ນຄົງຢູ່ໄດ້ເຖິງແມ່ນຈະມີບັນຫາອັນໃດກໍຕາມເຂົ້າມາໃນຊີວິດ ເໝືອນກັບຕົ້ນໄມ້ທີ່ມີຮາກຢັ່ງເລິກ. ເພງສັຣເສີນບົດ 119 ໄດ້ກ່າວສລອງຄວາມຍິ່ງໃຫຍ່ຂອງພຣະເຈົ້າທີ່ພຣະອົງສາມາດຊ່ອຍໄດ້ໃນຍາມລຳບາກ. ໃນຂໍ້ 17-24 ພວກເຮົາຈະເຫັນວ່າພຣະທັມຂອງພຣະເຈົ້າສາມາດຊ່ອຍເຮົາໄດ້ ເຖິງແມ່ນຢູ່ໃນຍາມຂັດສົນປານໃດກໍຕາມ. ຖ້າພວກເຮົາຢັ່ງຮາກເລິກໃນພຣະທັມຂອງພຣະເຈົ້າແລ້ວ ບັນຫາໃຫຍ່ປານໃດກໍຕາມ ພວກເຮົາຫຳສາມາດຕໍ່ສູ້ມັນໄດ້ດ້ວຍພລັງຈາກພຣະທັມຂອງພຣະເຈົ້າ.

**ພຣະຄັມພີກ່າວວ່າແນວໃດ?** ( ເບິ່ງຫົວຂໍ້ທີ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ເພງສັຣເສີນ 119:17-20</u>:**

*17 ຂໍຊົງໂຜດເມດຕາຜູ້ຮັບໃຊ້ຂອງພຣະອົງ ເພື່ອຂ້ານ້ອຍຈະມີຊີວິດ ແລະຖືຮັກສາພຣະທັມຂອງພຣະອົງ*
*18 ຂໍເປີດຕາຂ້ານ້ອຍເພື່ອຂ້ານ້ອຍຈະເຫັນການອັສຈັນຈາກພຣະທັມຂອງພຣະອົງ*
*19 ຂ້ານ້ອຍເປັນຄົນພະເນຈອນຢູ່ເທິງແຜ່ນດິນໂລກ ຂໍຢ່າຊົງເຊື່ອງບັງພຣະບັນຍັດຂອງພຣະອົງຈາກຂ້ານ້ອຍເສຍ*
*20 ຈິດໃຈຂອງຂ້ານ້ອຍຮ້ອນຮົນດ້ວຍການຄຳນຶງເຖິງກົດໝາຍຂອງພຣະອົງຕລອດເວລາ.*

ໃນຂໍ້ 17 ນັກປະພັນເພງສັຣເສີນໄດ້ປະກາດຕົນເອງວ່າ "ເປັນຜູ້ຮັບໃຊ້ພຣະເຈົ້າ." ເພິ່ນຍັງກ່າວເຖິງລັກສະນະຂອງຜູ້ຮັບໃຊ້ທີ່ແທ້ຈິງວ່າ:

1. **ຜູ້ຮັບໃຊ້ທີ່ແທ້ຈິງດຳລົງຊີວິດຢູ່ໃນພຣະທັມຂອງພຣະເຈົ້າ.** ນັກປະພັນເພງສັຣເສີນເປັນຜູ້ຮັບໃຊ້ທີ່ສັດຊື່ຂອງ

ພຣະເຈົ້າ, ແຕ່ເພິ່ນບໍ່ໄດ້ຮ້ອງຂໍໃຫ້ພຣະເຈົ້າເຫັນໃຈວ່າເພິ່ນເອງເປັນຄົນດີ ແຕ່ເພິ່ນໄດ້ອ້ອນວອນວ່າ, "ຂໍໃຫ້ກະທຳຕໍ່ຜູ້ຮັບໃຊ້ຂອງພຣະອົງດ້ວຍຄວາມເມດຕາ." ການທູນຂໍແບບນີ້ແມ່ນເຫັນພຣະຄຸນແລະຄວາມດີຂອງຜູ້ເປັນເຈົ້ານາຍ. ພຣະທັມຂອງພຣະອົງໄດ້ສອນພວກເຮົາວ່າພວກເຮົາມີເຈົ້ານາຍຜູ້ມີຄວາມເມດຕາສົງສານ ພວກເຮົາສາມາດທູນຂໍດ້ວຍມີຄວາມຫວັງວ່າພຣະອົງຈະປະທານໃຫ້.

2. **ຜູ້ຮັບໃຊ້ທີ່ແທ້ຈິງຮຽນຈາກພຣະທັມຂອງພຣະເຈົ້າ**. ໃນຂໍ້ 18 ຜູ້ປະພັນເພງສັຣເສີນໄດ້ທູນຂໍໃຫ້ພຣະເຈົ້າວ່າ "ຈົ່ງເປີດຕາຂ້ານ້ອຍເພື່ອຈະໄດ້ເຫັນສິ່ງອັສຈັນຈາກຄຳສອນຂອງພຣະອົງ." ມີຫລາຍໆຢ່າງທີ່ເຕັມຢູ່ໃນພຣະທັມຂອງພຣະເຈົ້າ ພວກເຮົາອາດບໍ່ເຫັນຖ້າພຣະເຈົ້າບໍ່ເປີດຕາຂອງພວກເຮົາກ່ອນ. ຖ້າປາສຈາກການນຳພາຂອງອົງພຣະວິນຍານບໍຣິສຸດ ພວກເຮົາຈະບໍ່ເຂົ້າໃຈສິ່ງທີ່ພຣະອົງໄດ້ບັນດົນໃຈ (ເບິ່ງ 1 ກຣທ 2:14-16).

ນັກປະພັນເພງສັຣເສີນບໍ່ພຽງເອີ້ນຕົນເອງວ່າເປັນຜູ້ຮັບໃຊ້ພຣະເຈົ້າເທົ່ານັ້ນ, ແຕ່ຍັງເອີ້ນຕົນເອງວ່າ "ເປັນຄົນຕ່າງດ້າວ" ຜູ້ເດີນທາງທ່ອງທ່ຽວຢູ່ໃນໂລກເພື່ອຈະເດີນທາງກັບບ້ານທີ່ຖາວອນ. ຊີວິດໃນໂລກນີ້ເປັນພຽງຊົ່ວຄາວ ແລະສັ້ນໆ ພວກເຮົາຈະບໍ່ຢູ່ໃນໂລກນີ້ຕລອດໄປ. ມີວັນນຶ່ງພວກເຮົາຈະຖືກເອີ້ນໃຫ້ອອກຈາກໂລກນີ້ກັບໄປຢູ່ບ້ານຖາວອນ (ໂຢຮັນ 14:3). ດັ່ງນັ້ນແຫລະ ອາຈານໂປໂລຈຶ່ງກ່າວວ່າພວກເຮົາທຸກຄົນເປັນສັນຊາດສວັນ. (ຟລປ 3:20).

ການເປັນສັນຊາດເມືອງສວັນນັ້ນບໍ່ພຽງແຕ່ພວກເຮົາມຸ້ງໜ້າໄປສູ່ສວັນເທົ່ານັ້ນ ແຕ່ພວກເຮົາໄດ້ຖືກແຍກໄວ້ແລ້ວພວກເຮົາຄວນເປັນຄົນເອົາໃຈໃສ່ຕໍ່ພຣະເຈົ້າແລະພຣະທັມຂອງພຣະອົງ. ໃນເວລາພວກເຮົາຖືກປ່ຽນແປງ ພວກເຮົາຈະບໍ່ເຮັດເໝືອນຊາວໂລກນີ້ (ໂຣມ 12:2).

ເປັນໜ້າສົນໃຈທີ່ຜູ້ຂຽນເພງສັຣເສີນໄດ້ກະທຳ ຄືເພິ່ນບໍ່ໄດ້ອ້ອນວອນໃຫ້ມີຄວາມປອດພັຍເວລາເດີນທາງໄປໃນໂລກນີ້ ແລະມີຊີວິດປະສົບຜົນສຳເຣັດ. ແຕ່ເພິ່ນອ້ອນວອນວ່າ, "ຢ່າເຊື່ອງພຣະທັມຂອງພຣະອົງຈາກຂ້ານ້ອຍ." ການອ້ອນວອນຂອງເພິ່ນແມ່ນຢາກໃຫ້ພຣະເຈົ້າປະທານສິ່ງທີ່ຈຳເປັນເວລາເດີນທາງ ຄືແຜນທີ່ ແລະທາງຖືກຕ້ອງ ໃຫ້ພຣະເຈົ້ານຳພາໃຫ້ເຮົາເຫັນທາງດີ (ພສສ 119:105).

ໃນຖານະເປັນຄົນຕ່າງດ້າວໃນໂລກນີ້ ພວກເຮົາຕ້ອງການພຣະທັມຂອງພຣະເຈົ້າເພື່ອເຮັດໃຫ້ພວກເຮົາເບິ່ງເຫັນໄດ້ດີ ເພາະວ່າເມື່ອພວກເຮົາໄດ້ໃຊ້ພຣະທັມໃນຊີວິດປະຈຳວັນ ພຣະອົງຈະປະທານໃຫ້ມີກຳລັງຕໍ່ສູ້ຢູ່ໃນໂລກທີ່ບໍ່ແມ່ນບ້ານທີ່ຖາວອນຂອງພວກເຮົາ.

*ຢູ່ໃນທາງໃດແດ່ ທີ່ຄຣິສຕຽນດຳເນີນຊີວິດຢູ່ໃນໂລກທຸກມື້ນີ້ ເໝືອນກັບວ່າເປັນຄົນຕ່າງດ້າວ?*

## 2. <u>ເພງສັຣເສີນ 119: 21-22</u>:

*21 ພຣະອົງຊົງປາບປາມຄົນຈອງຫອງ ຜູ້ທີ່ຖືກສາບແຊ່ງຜູ້ທີ່ໜີໄປຈາກພຣະບັນຍັດຂອງພຣະອົງ 22 ຂໍຊົງນຳການປ້ອຍດ່າ ແລະການໝິ່ນປມາດໄປຈາກຂ້ານ້ອຍ ເພາະຂ້ານ້ອຍໄດ້ຮັກສາພຣະໂອວາດຂອງພຣະອົງ.*

ໃນຂໍ້ 21 ນັກປະພັນເພງສັຣເສີນໄດ້ບອກລັກສະນະສາມຢ່າງຕໍ່ຜູ້ທີ່ຖືກຕຳໜິຈາກພຣະເຈົ້າ:

- **ບຸກຄະລິກລັກສະນະຂອງພວກເຂົາ.** ເປັນຄົນມັກໃຫຍ່, ອວດຕົວ, ແລະທະເຍີທະຍານ. ແຕ່ພຣະເຈົ້າໄດ້ເຕືອນຄົນຢ່າງນີ້ວ່າ: "ຄວາມຈອງຫອງຢ່າງນຳໜ້າການຖືກທຳລາຍ ແລະຈິດໃຈທີ່ຍິ່ງຈອງຫອງນຳໜ້າການລົ້ມລົງ." (ສພສ 16:18).

- **ສະພາບຊີວິດຂອງພວກເຂົາ.** ພວກເຂົາຢູ່ໃນຄຳສາບແຊ່ງ. ນີ້ແມ່ນການສາບແຊ່ງອັນຮ້າຍແຮງແທ້ໆ: "ຢ່າເຂົ້າໃຈຜິດ ພວກເຈົ້າຈະຫລອກລວງພຣະເຈົ້າບໍ່ໄດ້ ເພາະວ່າຜູ້ໃດຫວ່ານສິ່ງໃດລົງກໍຈະໄດ້ເກັບກ່ຽວສິ່ງເຫລົ່ານັ້ນ ຜູ້ທີ່ຫວ່ານຕາມຕັນຫາມະນຸດທັມມະດາກໍເກັບກ່ຽວຄວາມເປື່ອຍເນົ່າຈາກຕັນຫາມະນຸດນັ້ນ ແຕ່ຜູ້ທີ່ຫວ່ານຕາມພຣະວິນຍານກໍເກັບກ່ຽວຊີວິດອັນຕລອດໄປເປັນນິດຈາກພຣະວິນຍານນັ້ນ" (ຄລຕ 6:7-8)
- **ການກະທຳຂອງພວກເຂົາ.** ພວກເຂົາໄດ້ "ເດີນອອກຈາກຄຳສັ່ງຂອງພຣະເຈົ້າ" ຕ້ອງເຂົ້າໃຈວ່າຜູ້ໃດກໍຕາມທີ່ຕໍ່ສູ້ພຣະເຈົ້າຈະໄດ້ຮັບຜົນຕອບແທນຢ່າງຮ້າຍແຮງ "ພຣະເຈົ້າຊົງເບິ່ງແຍງຄົນຊອບທັມ ແຕ່ພຣະອົງທຳລາຍທາງຂອງຄົນຊົ່ວ." (ພສສ 1:6)

ນັກປະພັນເພງສັຣເສີນຄອຍຖ້າໃຫ້ພຣະເຈົ້າປົກປ້ອງຮັກສາຈາກພວກສັດຕຣູຜູ້ຂົ່ມເຫງເພິ່ນ ແຕ່ເຫັນວ່າສັດຕຣູນັ້ນເຮັດໃຫ້ເພິ່ນເຂົ້າໄປໃກ້ພຣະເຈົ້າຍິ່ງຂຶ້ນ. ພວກສັດຕຣູບໍ່ໄດ້ຂົ່ມເຫງດ້ານຮ່າງກາຍເທົ່ານັ້ນ ແຕ່ໄດ້ຂົ່ມເຫງດ້ານຈິດໃຈແລະດ້ານຄວາມສັມພັນນຳ. ດັ່ງນັ້ນ ຈຶ່ງເປັນເຫດໃຫ້ເພິ່ນຂຽນວ່າ "ໃຫ້ເອົາຄວາມໝິ່ນປມາດແລະການບໍ່ໃຫ້ກຽດໜີຈາກຂ້ານ້ອຍໄປເສັຽ" ຊຶ່ງໄດ້ເຕືອນພວກເຮົາເໝືອນກັນວ່າບໍ່ຈຳເປັນຈະຖືກຄົນຕີຈຶ່ງເຈັບ ພວກເຂົາສາມາດເຮັດໃຫ້ພວກເຮົາໄດ້ຮັບຄວາມເຈັບໄດ້ເຊັ່ນ: ຫລອກລວງ, ຕົ໋ມ, ຫລືເວົ້າດູຖູກ.

ເມື່ອນັກປະພັນເພງສັຣເສີນຖືກດູຖູກແລະໝິ່ນປມາດ ເພິ່ນຈຶ່ງໄດ້ອ້ອນວອນຂໍໃຫ້ພຣະເຈົ້າເອົາສິ່ງນັ້ນໜີອອກໄປ. ເຊັ່ນດຽວກັນໃນທຸກວັນນີ້ ຖ້າພວກເຮົາຖືກໝິ່ນປມາດພວກເຮົາບໍ່ຄວນຕອບແທນດ້ວຍຕົນເອງ ແຕ່ໃຫ້ທູນຂໍພຣະເຈົ້າໃຫ້ຊ່ອຍ ພວກເຮົາບໍ່ຄວນຕອບສິ່ງຮ້າຍດ້ວຍຄວາມຮ້າຍ ແຕ່ໃຫ້ສະແດງຄວາມຮັກອັນສຸພາບ ເພື່ອພວກເຂົາຈະໄດ້ເຫັນຄວາມເຊື່ອແລະຄວາມຮັກຂອງພຣະເຈົ້າໃນຊີວິດຂອງພວກເຮົາ.

ຂ່າວດີມີຢູ່ວ່າພຣະຄຳຂອງພຣະເຈົ້າເຮັດໃຫ້ພວກເຮົາຈົດຈ້ອງສາຍຕາຕໍ່ພຣະເຈົ້າຜູ້ມີພລັງແລະອຳນາດ ເພື່ອຊ່ອຍພວກເຮົາໃຫ້ລອດພົ້ນຈາກຄູ່ຕໍ່ສູ້ດ້ວຍພລັງຂອງອົງພຣະຄຣິດ. (ຟລປ 4:13).

| |
|---|
| ເມື່ອຄຣິສຕຽນຖືກດູໝິ່ນແລະຖືກໃສ່ຮ້າຍ ຄວນຈະໂຕ້ຕອບຢ່າງໃດຈຶ່ງຈະເໝາະສົມ? |

### 3. <u>ເພງສັຣເສີນ 119:23-24</u>:

*23 ເຖິງແມ່ນວ່າພວກເຈົ້ານາຍນັ່ງປຶກສາກັນຕໍ່ສູ້ຂ້ານ້ອຍ ຜູ້ຮັບໃຊ້ຂອງພຣະອົງຈະພາວະນາກົດເກນຂອງພຣະອົງ*
*24 ບັນດາພຣະໂອວາດຂອງພຣະອົງເປັນຄວາມປິຕິຍິນດີຂອງຂ້ານ້ອຍເປັນທີ່ປຶກສາຂອງຂ້ານ້ອຍ*

ຂໍ້ 23 ນັກປະພັນເພງສັຣເສີນໄດ້ເປີດເຜີຍຕົ້ນຕໍຂອງຜູ້ຂົ່ມເຫງພວກເຮົາ. ແນ່ນອນ ຜູ້ຂົ່ມເຫງເພິ່ນນັ້ນອາດເປັນຜູ້ມີຕຳແໜ່ງສູງ ຖ້າເປັນດັ່ງນັ້ນໃນຊີວິດຂອງພວກເຮົາຈະເຮັດແນວໃດ? ທ່ານຈະແລ່ນໜີໄປດ້ວຍຄວາມຢ້ານຊັ້ນບໍ່? ຫລືຕອບໂຕ້? ຫລືຜ່ອນສັ້ນຜ່ອນຍາວ? ຫລືທ່ານຈະເຮັດເໝືອນນັກປະພັນເພງສັຣເສີນເຮັດ? ຜູ້ຮັບໃຊ້ໄດ້ຄຶດເຖິງພຣະທັມຄຳສອນຂອງພຣະເຈົ້າສເມີ ເຖິງແມ່ນຄົນອື່ນຈະເຮັດຫລືເວົ້າບໍ່ດີກໍຕາມ ເພິ່ນເອົາໃຈໃສ່ຕໍ່ຄຳສອນຂອງພຣະເຈົ້າ.

ນັກປະພັນເພງສັຣເສີນເອົາຊະນະໄດ້ເພາະເພິ່ນໄດ້ເບິ່ງແລະເຮັດຕາມພຣະເຈົ້າ. ຖ້າພວກເຮົາເຮັດດັ່ງນີ້ພວກເຮົາຈະໄດ້ຮັບຜົນປໂຍດສອງຢ່າງ:

1. **ມີຄວາມຍິນດີ.** "ພຣະໂອວາດຂອງພຣະອົງເປັນຄວາມຍິນດີຂອງຂ້ານ້ອຍ" ຂໍ້ 24 ບໍ່ແມ່ນຄັ້ງທຳອິດທີ່ນັກປະພັນໄດ້ກ່າວຢ່າງນີ້. ເພິ່ນໄດ້ປະກາດມາແລ້ວວ່າ, "ຂ້ານ້ອຍປິຕິຍິນດີໃນບັນດາແຫ່ງພຣະໂອວາດຂອງພຣະ

ອົງຫລາຍເທົ່າກັບຄວາມຮັ່ງມີທັງປວງ.” (14) ແລະ “ຂ້ານ້ອຍປິຕິຍິນດີໃນກົດເກນຂອງພຣະອົງ” (16). ເຫັນວ່ານັກປະພັນເພງສັຣເສີນບໍ່ໄດ້ມີຄວາມຍິນດີເພາະຂຶ້ນຢູ່ກັບສິ່ງຂອງໃນໂລກ ແຕ່ເພິ່ນໄດ້ມີຄວາມຍິນດີຍ້ອນພຣະຄຳຂອງພຣະເຈົ້າຕ່າງຫາກ. ດັ່ງນັ້ນ, ເພິ່ນມີຄວາມຍິນດີຖ້າມກາງຄວາມທຸກລຳບາກໃນໂລກ. ພວກເຮົາກໍເຊັ່ນກັນຄວນເອົາຄວາມຈິງດັ່ງນີ້ມາປະກອບໃຊ້ໂດຍເອົາພຣະທັມຂອງພຣະເຈົ້າເປັນທີ່ເພິ່ງ

2. **ທິດທາງ.** “ຄຳສັ່ງຂອງພຣະອົງເປັນທີ່ປຶກສາຂອງຂ້ານ້ອຍ.” ແມ່ນແທ້ພຣະທັມຂອງພຣະເຈົ້າເປັນຜູ້ປຶກສາ, ນຳພາແລະຊີ້ທິດທາງໃຫ້. ພຣະທັມຂອງພຣະເຈົ້າແນະນຳທາງທີ່ພວກເຮົາຄວນຕິດຕາມ ພຣະທັມຈະບໍ່ເຮັດໃຫ້ພວກເຮົາຫຼົງທາງຈັກເທື່ອ. ສິ່ງທີ່ເຫຼືອຢູ່ນັ້ນຄືໃຫ້ພວກເຮົາເຊື່ອຟັງແລະເອົາພຣະທັມຂອງພຣະເຈົ້ານຳພາ.

ກະສັດໂຊໂລໂມນໄດ້ຂຽນວ່າ: “ຈົ່ງໄວ້ວາງໃຈໃນພຣະຜູ້ເຈົ້າດ້ວຍສຸດໃຈຂອງເຈົ້າ ແລະຢ່າເຊື່ອໝັ້ນຄວາມເຂົ້າໃຈຂອງຕົນເອງ ຈົ່ງຍອມຮັບຮູ້ພຣະອົງໃນທຸກວິທີທາງຊີວິດຂອງເຈົ້າ ແລະພຣະອົງຈະຊົງນຳໜ້າເຈົ້າໄປໃນທາງແຫ່ງການດຳເນີນຊີວິດຂອງເຈົ້ານັ້ນ” (ສພສ 3:5-6)

*ດົນປານໃດແລ້ວ ທີ່ທ່ານໃຊ້ພຣະຄຳຂອງພຣະເຈົ້າເປັນທີ່ປຶກສາໃນຊີວິດຂອງທ່ານ?*

## ນຳໃຊ້ໃນຊີວິດ

ທ່ານຈະມີວິທີເຮັດຢ່າງໃດໃນການໃຊ້ພຣະທັມຂອງພຣະເຈົ້າໃນຊີວິດເວລາພົບກັບຄວາມລຳບາກ? ຂໍໃຫ້ພິຈາຣະນາໃນຂໍ້ແນະນຳດັ່ງຕໍ່ລົງໄປນີ້:

- **ຢືນຢູ່ຢ່າງໝັ້ນຄົງ**. ຮູ້ຈັກໃນສິ່ງທີ່ທ່ານໄດ້ອ່ານ, ໄດ້ເບິ່ງ ຫລືໄດ້ຟັງ ທີ່ນອກໄປຈາກພຣະຄຳຂອງພຣະເຈົ້າ. ກຳຈັດສິ່ງຈູງໃຈທີ່ເປັນທາງລົບເຫລົ່ານັ້ນອອກໄປ ຖ້າຫາກຈຳເປັນ.

- **ຢືນຢູ່ຮ່ວມກັນ.** ປຶກສາກັບຄົນອື່ນໆເຖິງພຣະຄຳຂອງພຣະເຈົ້າທີ່ເຄີຍຊ່ອຍໃນຍາມລຳບາກມາແລ້ວ. ຂຽນຂໍ້ຄວາມຕ່າງໆເຫລົ່ານັ້ນຕິດໄວ້ໃນບ່ອນປະຊຸມແລະທາງອິນເຕີເນັດ.

- **ຢືນຮ່ວມກັບຄົນອື່ນ.** ອາດມີຄົນຖືກຂົ່ມເຫງ ຫລືຖືກປມາດເພາະພວກເຂົາໄດ້ຕິດຕາມແລະເຊື່ອຟັງອົງພຣະເຢຊູ. ໜູນໃຈຄົນເຫລົ່ານັ້ນ, ອະທິຖານຮ່ວມກັບເຂົາເຈົ້າ, ເດີນທາງຮ່ວມກັບເຂົາເຈົ້າ ແລະຊ່ອຍເຫລືອໃຫ້ເຂົາເຈົ້າຕັ້ງໝັ້ນຄົງໃນພຣະທັມຂອງພຣະເຈົ້າ.

ໃນຊີວິດນີ້ທ່ານອາດຖືກຂົ່ມເຫງ ແຕ່ມີຂ່າວດີຢາກບອກວ່າໃຫ້ທ່ານຕັດສິນໃຈວ່າຈະຕອບສນອງບັນຫານັ້ນຢ່າງໃດ? ທ່ານຈະເປັນຕົ້ນຕານ ຫລືຕົ້ນໂອກ? ໃຫ້ເລືອກເອົາຕາມໃຈໄດ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BV**